ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ข่าว NEWS
ພະແນກຄົ້ນຄວ້າຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປະຈຳປີ 2025

ໃນຕອນບ່າຍຂອງວັນທີ 19 ສິງຫາ 2025 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດຳເນີນກອງປະຊຸມສະພາ ບໍລິຫານ ທຫລ ຄັ້ງທີ II ປະຈຳປີ 2025, ໂດຍການເປັນປະທານຂອງ**ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການ, ປະທານ ສະພາບໍລິຫານ ທຫລ**, ມີບັນດາທ່ານຮອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ, ຮອງຜູ້ວ່າການ ທຫລ ແລະ ບັນດາກົມທີ່ກ່ຽວຂ້ອງພາຍໃນ ທຫລ ເຂົ້າຮ່ວມທັງໃນຮູບແບບເຊິ່ງໜ້າ ແລະ ຮູບແບບທາງໄກ. ການດຳເນີນກອງປະຊຸມ ໃນຄັ້ງນີ້ ແມ່ນເພື່ອເປັນການສະຫຼຸບໝາກຜົນການເຄື່ອນໄຫວວຽກງານ ຂອງ ທຫລ ໃນໄລຍະ 7 ເດືອນປີ 2025 ແລະ ກຳນົດທິດທາງແຜນການຮອດທ້າຍປີ 2025, ພ້ອມທັງຮັບຟັງຜົນກອງປະຊຸມຄະນະກຳມະການນະໂຍບາຍເງິນຕາ ແລະ ວຽກງານອື່ນໆທີ່ເປັນຈຸດສຸມຈຳນວນໜຶ່ງ.

ກອງປະຊຸມ ໄດ້ສຸມໃສ່ປະກອບຄຳຄິດ-ຄຳເຫັນ ຕໍ່ການສະຫຼຸບລາຍງານແຕ່ລະໜ້າວຽກຂອງ ທຫລ ຢ່າງກົງໄປກົງມາ ຊຶ່ງໄດ້ເຮັດໃຫ້ມີຂໍ້ສະຫຼຸບທີ່ເລິກເຊິ່ງ ຕໍ່ກັບຜົນສຳເລັດ ແລະ ຂໍ້ຄົງຄ້າງໃນແຕ່ລະໜ້າວຽກ, ພ້ອມທັງກຳນົດທິດທາງແຜນການໃຫ້ຈະແຈ້ງ ແລະ ແທດເໝາະກັບສະພາບການຕົວຈິງຍິ່ງຂຶ້ນ. ໃນຕອນທ້າຍ, ປະທານກອງປະຊຸມ ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນທີ່ຮັບຜິດຊອບ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຢ່າງຕັ້ງໜ້າ ເພື່ອໃຫ້ບັນລຸບັນດາຄາດໝາຍຕົວຊີ້ວັດທາງດ້ານເງິນຕາ ທີ່ສະພາແຫ່ງຊາດໄດ້ຮັບຮອງ. ໄປຄຽງຄູ່ກັບການປັບປຸງລະບົບທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ມີຄວາມໝັ້ນຄົງ ເຂັ້ມແຂງ, ປັບປຸງລະບົບການຊຳລະໃຫ້ມີຄວາມທັນສະໄໝ, ປອດໄພ.

ກອງປະຊຸມດັ່ງກ່າວໄດ້ດຳເນີນເປັນເວລາເຄິ່ງວັນ ດ້ວຍບັນຍາກາດທີ່ເຄັ່ງຮ້ອນ-ຟົດຟື້ນ ແລະ ດ້ວຍຄວາມຮັບຜິດຊອບສູງຂອງຜູ້ເຂົ້າຮ່ວມກອງປະຊຸມ ຊຶ່ງໄດ້ເຮັດໃຫ້ທຸກເນື້ອໃນທີ່ນຳມາພິຈາລະນາໄດ້ຖືກຮັບຮອງຈາກກອງປະຊຸມຕາມລະດັບຄາດໝາຍທີ່ກຳນົດໄວ້ຢ່າງຈົບງາມ.

ຂ່າວ-ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ